# ຄຳສັ່ງປົກປ້ອງຮັກສາ (ທຸກໆກໍຣະນີ)
# ORDER FOR PROTECTION (All Cases)

ອັນນີ້ແມ່ນຄຳສັ່ງປົກປ້ອງຮັກສາຕົວຈິງຊຶ່ງຫົວໜ້າສານເຊັນຊື່ໃສ່. ຄຳສັ່ງໃບນີ້ຈະຢູ່ໃນບັນທຶກຂອງສານ. ທ່ານຈະຕ້ອງໄດ້ຂໍເອົາໃບອັດສຳເນົາທີ່ຖືກປັ້ງປືນຂອງຄຳສັ່ງໃບນີ້ຈາກສະມຽນຂອງສານເພື່ອວ່າທ່ານສາມາດສະແດງໃຫ້ຕຳຣວດເຫັນ.

ຂຽນຊື່ຂອງທ່ານໃສ່ໃນຖານະເປັນໂຈດ ຫລື ຜູ້ຟ້ອງຮ້ອງ, ແລະໃສ່ວັນເກີດຂອງທ່ານໃນບ່ອນທີ່ບອກວ່າ "DOB". ຂຽນຊື່ ແລະເກີດຂອງຈຳເລີຍ ຫລື ຜູ້ຖືກຟ້ອງຮ້ອງໃສ່. ຖ້າຫາກວ່າທ່ານບໍ່ຫູ້ຈັກວັນເກີດຂອງຈຳເລີຍ, ໃຫ້ຂຽນອາຍຸຂອງຈຳເລີຍໃສ່.

**ຖ້າບໍ່ມີເດັກຕ່ຳກວ່າກະສຽນກ່ຽວຂ້ອງນຳ,** ໃຫ້ໝາຍໃສ່ບ໋ອກ "ບໍ່ມີເດັກຕ່ຳກວ່າກະສຽນກ່ຽວຂ້ອງນຳ".,

ຖ້າຫາກມີເດັກຕ່ຳກວ່າກະສຽນໄດ້ກ່ຽວຂ້ອງນຳ, ໃຫ້ຂຽນຊື່, ອາຍຸ, ຜິວພັນ, ແລະເພດຂອງເດັກແຕ່ລະຄົນຜູ້ກ່ຽວຂ້ອງກັບຄະດີ.

[ຫົວໜ້າສານຈະຂຽນປະກອບສ່ວນເຫລືອຂອງຟອມໃບນີ້]
[ໝາຍໃສ່ບ໋ອກດຽວກັນຊຶ່ງທ່ານໄດ້ໝາຍໃສ່ໃນໃບຄຳຮ້ອງ]

[ຣາຍລະອຽດຕໍ່ລົງໄປນີ້ກ່ຽວພັນກັບສິ່ງທີສາມ, ສີ່ ແລະ ສິບຫ້າ, ເທົ່ານັ້ນ:
ສິ່ງທີສາມ, ຢັບຢັ້ງກີດກັ້ນຈຳເລີຍຈາກການເຂົ້າມາໃນພື້ນທີ່ຂອງ ຫລື ເຂົ້າມາໃນເຮືອນຂອງທ່ານ, ມີບ່ອນວາງສຳລັບທ່ານທີ່ຈະຂຽນທີ່ຢູ່ເຮືອນຂອງທ່ານໃສ່. ທ່ານມີສິດທີ່ຈະສເນີໃຫ້ເກັບຮັກສາທີ່ຢູ່ຂອງທ່ານໄວ້ບໍ່ໃຫ້ເປີດເຜີຍ (ຖືເປັນຄວາມລັບ) . ທ່ານບໍ່ໄດ້ຖືກບັງໃຫ້ຂຽນທີ່ຢູ່ເຮືອນຂອງທ່ານໃສ່ຖ້າຫາກວ່າທ່ານເປັນຫ່ວງນຳຄວາມປອດພັຍຂອງທ່ານ ຫລື ການຂີ້ລັກເອົາຊື່ປະຈຳຕົວ. ເຖິງຢ່າງໃດກໍ່ຕາມ, ການບັງຄັບໃຊ້ຄຳສັ່ງຈະງ່າຍຂຶ້ນກວ່າເກົ່າຖ້າຫາກວ່າທີ່ຢູ່ຂອງທ່ານໄດ້ຖືກລວມຢູ່ນຳ. ຖ້າຫາກວ່າທ່ານຕັດສິນໃຈທີ່ຈະລວມທີ່ຢູ່ຂອງທ່ານໃສ່, ກະຣຸນາຂຽນທີ່ຢູ່ອັນຄົບຖ້ວນລວມທັງເມືອງໃສ່ນຳ.

ສິ່ງທີສີ່ເອົາສິດສຸດຂາດຄົນດຽວໃຫ້ທ່ານໃນບ້ານເຮືອນທີ່ທ່ານ ແລະ ຈຳເລີຍອາສັຍຢູ່ຮ່ວມກັນ, ມີບ່ອນວ່າງໃຫ້ທ່ານຂຽນທີ່ຢູ່ເຮືອນຮ່ວມກັນໃສ່. ທ່ານມີສິດທີ່ຈະສເນີໃຫ້ເກັບຮັກສາທີ່ຢູ່ຂອງທ່ານໄວ້ບໍ່ໃຫ້ເປີດເຜີຍ (ຖືເປັນຄວາມລັບ) . ທ່ານບໍ່ໄດ້ຖືກບັງໃຫ້ຂຽນທີ່ຢູ່ເຮືອນຂອງທ່ານໃສ່ຖ້າຫາກວ່າທ່ານເປັນຫ່ວງ ນຳຄວາມປອດພັຍຂອງທ່ານ ຫລື ການຂີ້ລັກເອົາຊື່ປະຈຳຕົວ. ເຖິງຢ່າງໃດກໍ່ຕາມ, ການບັງຄັບໃຊ້ຄຳສັ່ງຈະງ່າຍຂຶ້ນກວ່າເກົ່າຖ້າຫາກວ່າທີ່ຢູ່ຂອງທ່ານໄດ້ຖືກລວມຢູ່ນຳ. ຖ້າຫາກວ່າທ່ານຕັດສິນໃຈທີ່ຈະລວມທີ່ຢູ່ຂອງທ່ານໃສ່, ກະຣຸນາຂຽນທີ່ຢູ່ອັນຄົບຖ້ວນລວມທັງເມືອງໃສ່ນຳ.

ຫລັງຈາກສິ່ງທີສິບຫ້າ, ກ່ຽວກັບການຢ້ຽມຢາມເດັກຂອງຈຳເລີຍ, ມີໃບແຈ້ງການກ່ຽວກັບກົດໝາຍ Child Relocation Act. ຖ້າຫາກວ່າທ່ານໄດ້ຮັບມອບໝາຍການຄຸ້ມຄອງຂອງເດັກ ແລະ ທ່ານມີແຜນການທີ່ຍ້າຍໄປນຳເດັກນ້ອຍ, ທ່ານອາດຈະຕ້ອງໄດ້ເອົາໃບແຈ້ງການໃຫ້ຈຳເລີຍວ່າທ່ານຈະຍ້າຍເດັກນ້ອຍ. ຈຳເລີຍຈະມີສິດທີ່ຈະຄັດຄ້ານ. ໃຫ້ຕິດຕໍ່ໄປຫາສະມຽນຂອງສານ, ຜູ້ປະສານງານຢູ່ນຳສານ ຫລື ຜູ້ຊ່ວຍຕ່າງໜ້າເຣື່ອງໃນການຜິດຖອງຮຸນແຮງໃນຄອບຄົວກ່ຽວກັບສິດທິ ແລະ ໜ້າທີ່ຂອງພາຍໃຕ້ກົດໝາຍ Child Relocation Act]

ບ໋ອກຣາຍລະອຽດຢູ່ຂ້າງລ່າງຂອງໜ້າສານ ເຕືອນຈຳເລີຍເຖິງສິ່ງທີ່ສາມາດເກີດຂຶ້ນໄດ້ຖ້າຫາກວ່າຈຳເລີຍລ່ວງລະເມີດຄຳສັ່ງນີ້.

## ການຊ່ວຍເຫລືອຂອງຕຳຣວດ

ໝາຍໃສ່ບ໋ອກທີ່ເໝາະສົມ ແລະ ຂຽນຊື່ຂອງກົມຕຳຣວດໃສ່ບ່ອນທີ່ຈະຮັບຜິດຊອບຕອບໄປຫາບ່ອນທີ່ທ່ານອາສັຍຢູ່ເພື່ອວ່າຈະສາມາດເອົາເຂົ້າຄຳສັ່ງ ໃບນີ້ສາມາດຖືກບັງໄວ້ຢູ່ໃນຣະບົບຄອມພິວເຕີທົ່ວຣັດ.

ໝາຍໃສ່ບ່ອກທີ່ເໝາະສົມ ແລະ ຂຽນຊື່ຂອງກົມຕຳຣວດໃສ່ບ່ອນທີ່ຈະຮັບຜິດຊອບຕອບໄປຫາບ່ອນທີ່ຈຳເລີຍອາສັຍຢູ່ເພື່ອວ່າຕຳຣວດສາມາດຍື່ນຄຳສັ່ງໃບນີ້ໃສ່ມືໃຫ້ຈຳເລີຍ.

ໃຫ້ໝາຍໃສ່ບ່ອກທີ່ເໝາະສົມກ່ຽວກັບການສົ່ງຂອງຄຳສັ່ງໃບນີ້.

ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອຈາກຕຳຣວດເພື່ອວ່າຈະເຂົ້າໄປເຮືອນຂອງທ່ານໄດ້, ໝາຍໃສ່ບ່ອກນັ້ນ.

ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອໃນການໄປເອົາສິ່ງຂອງສ່ວນຕົວ, ໝາຍໃສ່ບ່ອກນັ້ນ ແລະ ບ່ອກທີ່ສະແດງໃຫ້ເຫັນວ່າສິ່ງຂອງນັ້ນຢູ່ໃນເຮືອນທີ່ຢູ່ຮ່ວມກັນກັບຈຳເລີຍ, ເຮືອນຂອງຈຳເລີຍ ຫລື ສະຖານທີ່ອື່ນໆ. (ທ່ານຈະຕ້ອງໄດ້ຕິດຕໍ່ສະຖານນີຕຳຣວດໃນທ້ອງຖິ່ນຂອງທ່ານເພື່ອຈະນັດພົບໃໝ່ວ່າເມື່ອໃດ ແລະ ຢູ່ໃສທີ່ຈະພົບກັນເພື່ອວ່າຕຳຣວດສາມາດຊ່ວຍເຫລືອທ່ານ.)

ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອໃນການໄປເອົາຄຸ້ມຄອງຮ່າງກາຍຂອງເດັກຂອງທ່ານ, ໝາຍໃສ່ບ່ອກນັ້ນ. (ມີສິ່ງຈຳກັດທີ່ເຈົ້າໜ້າທີ່ຕຳຣວດສາມາດເຮັດໄດ້. ໃຫ້ຕິດຕໍ່ໄປຫາກົມຕຳຣວດທ້ອງຖິ່ນຂອງທ່ານ).

ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອໄປເອົາຣົດຍົນທີ່ສານໄດ້ອອກຄຳສັ່ງສຳລັບການໃຊ້ຂອງທ່ານ, ໝາຍໃສ່ບ່ອກນີ້.

ໃຫ້ໝາຍໃສ່ບ່ອກ "ອື່ນໆ" ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອເພີ້ມເຕີມ ແລະ ບັນລະຍາຍວ່າຕ້ອງການຊ່ວຍເຫລືອນັ້ນແມ່ນຫຍັງ?

ຖ້າຫາກວ່າທ່ານມີຄຳຖາມແນວໃດກ່ຽວກັບຄຳສັ່ງໃບນີ້, ສອບຖາມນຳສມຽນຂອງສານ, ຜູ້ປະສານງານໃນສານ ຫລື ຜູ້ຊ່ວຍເຫລືອນຳການຜິດຖຽງຮຸນແຮງໃນຄອບຄົວ.

ເຊັນຊື່ໃສ່ຂ້າງລຸ່ມຂອງໃບຟອມບ່ອນທີ່ບອກວ່າ "ສເນີໂດຍ" ແລະ "ໂຈດ" ແລະ ໃສ່ວັນທີວັນນີ້. ຈຳເລີຍຈະເຊັນຊື່ໃສ່ໃບຟອມຖ້າຫາກວ່າຈຳເລີຍມາໃນເວລາຟັງເຣື່ອງ, ແລະ ບໍ່ມີການບໍຣິການແນວໃດອີກທີ່ຈຳເປັນ.

ຕໍ່ໄປນີ້ແມ່ນຕົວຢ່າງຂອງໃບຄຳສັ່ງສຳລັບການປົກປ້ອງຮັກສາຕົວຢ່າງ:

# ຕົວຢ່າງ

| ສານແຫ່ງຣັດວໍຊິງຕັນ<br>ສຳລັບ | ເລກທີ<br><br>**ຄຳສັ່ງສຳລັບການປົກປ້ອງຮັກສາ**<br>(ORPRT) (ທຸກໆກໍຣະນີ)<br>(ການກະທຳຂອງສມຣຸນຕ້ອງໄດ້ເຮັດ) |
|---|---|
| ______________________ ____________<br>ຜູ້ຟ້ອງຮ້ອງ (ໂຈດ) ວັນເກີດ<br>ຕໍ່<br><br>______________________ ____________<br>ຜູ້ຖືກຟ້ອງຮ້ອງ (ຈຳເລີຍ) ວັນເກີດ | ທີ່ຢູ່ຂອງສານ: ______________________<br>______________________<br>ເລກໂທຣະສັບ : ( ) |

ສານມີສິດເໜືອກວ່າທຸກຝ່າຍ, ເດັກຕ່ຳກວ່າກະສຽນ, ແລະ ເຣື່ອງທີ່ກ່ຽວຂ້ອງ. ☐ ຖ້າເດັກຕ່ຳກວ່າກະສຽນໄດ້ກ່ຽວຂ້ອງນຳ, ຣັດນີ້ ☐ ມີສິດດຳເນີນການຕໍ່ໄປໂດຍສະເພາະ ☐ ແມ່ນຣັດຂອງເຮືອນ; ☐ ບໍ່ມີຣັດອື່ນທີ່ມີສິດດຳເນີນການຕໍ່ໄປໂດຍສະເພາະ; ☐ ອື່ນໆ: ___

ໃບແຈ້ງການຂອງການຟັງເຣື່ອງອັນນີ້ໄດ້ຖືກສົ່ງໃຫ້ໃນມືຂອງຈຳເລີຍໂດຍ ☐ ການສົ່ງໃຫ້ສ່ວນຕົວ ☐ ການສົ່ງທາງໄປສະນີໂດຍອີງຕາມຄຳສັ່ງຂອງສານ ☐ ການສົ່ງໃຫ້ໂດຍການລົງໜັງສືຕີພິມໂດຍອີງຕາມຄຳສັ່ງຂອງສານ ☐ ອື່ນໆ______________________

ຄຳສັ່ງໃບນີ້ໄດ້ຖືກສົ່ງອອກມາໂດຍສອດຄ່ອງກັບກົດໝາຍ the Full Faith and Credit provisions of VAWA: 18 U.S.C § 2265.
ຣາຍລະອຽດປະຈຳຕົວຂອງເດັກຕ່ຳກວ່າກະສຽນ ☐ ບໍ່ມີເດັກຕ່ຳກວ່າກະສຽນກ່ຽວຂ້ອງນຳ.

| ຊື່ (ຊື່, ຊື່ກາງ, ນາມສະກຸນ) | ອາຍຸ | ຜິວພັນ | ເພດ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |

ໂດຍອີງຕາມໃບຄຳຮ້ອງ, ຄຳໃຫ້ການ, ແລະ ບັນທຶກຂອງຄະດີ, ສານພົບວ່າຜູ້ຖືກຟ້ອງຮ້ອງ ຫລື ຈຳເລີຍໄດ້ທຳຄວາມຜິດໃນການຜິດຖຽງຮຸນແຮງໃນຄອບຄົວຕາມທີ່ໄດ້ຖືກຕີຄວາມໝາຍຢູ່ໃນກົດໝາຍ RCW 26.50.010 ແລະ ສະແດງໃຫ້ທີ່ເປັນນ່າເຊື່ອໄດ້ວ່າເປັນການຂົ່ມຂູ່ຕໍ່ຄວາມປອດພັຍທາງຮ່າງກາຍຂອງຜູ້ຟ້ອງຮ້ອງ, **ແລະ ເພາະສະນັ້ນແລ້ວຈຶ່ງໄດ້ອອກຄຳສັ່ງວ່າ:**

| | |
|---|---|
| | [1] ຈຳເລີຍຖືກກີດກັ້ນຈາກການກໍ່ໃຫ້ເກີດມີການເປັນອັນຕຣາຍຕໍ່ຮ່າງກາຍ, ການຂາດເຈັບຕາມຮ່າງກາຍ, ການທຳຮ້າຍຕົວ, ລວມທັງການ ທຳຮ້າຍທາງເພດ, ແລະ ຈາກການທຳຮ້າຍ, ການເຝົ້າຣົບກວນ, ການຂົ່ມຂູ່ ຫລື ການຕິດຕາມຣົບກວນ ☐ ໂຈດ ☐ ເດັກຕ່ຳກວ່າກະ ສຽນທີ່ຖືກບົ່ງຊື່ຢູ່ໃນຕາຕະລາງຂ້າງເທິງນີ້ ☐ ເດັກຕ່ຳກວ່າກະສຽນເຫລົ່ານີ້ເທົ່ານັ້ນ. |

| | |
|---|---|
| | 2 ຈຳເລີຍຖືກກີດກັ້ນສັ່ງຫ້າມບໍ່ໃຫ້ເຂົ້າມາໃກ້ ຫລື ຕິດຕໍ່ພົວພັນບໍ່ວ່າໃນກໍຣະນີໃດໆດ້ວຍຕົວເອົາເອງ ຫລື ຜ່ານທາງຜູ້ອື່ນ, ດ້ວຍທາງໂທຣະສັບ, ທາງຈົດໝາຍ, ຫລື ດ້ວຍທາງອື່ນໆໂດຍທາງກົງ ຫລື ທາງອ້ອມ, ຍົກເວັ້ນແຕ່ຈະເປັນການສົ່ງເອກສານຂອງຄະດີທາງໄປ ສະນີ ຫລື ໜັງສືຜ່ານທາງສາມໂດຍຝ່າຍທີ 3 ຫລື ໂດຍການຕິດຕໍ່ຈາກທະນາຍຄວາມຂອງຈຳເລີຍກັບ. ☐ ໂຈດ ☐ ເດັກ ຜູ້ທີ່ມີຊື່ຢູ່ຕາມ/ໃນຕາຕະລາງຂ້າງເທິງນີ້ ☐ ເດັກຕ່ຳກະສຽນເຫລົ່ານີ້ເທົ່ານັ້ນ.<br><br>ຖ້າຫາກວ່າທັງສອງຝ່າຍຢູ່ສະຖານທີ່ບ່ອນດຽວກັນ, ຈຳເລີຍຈະຕ້ອງໜີອອກໄປ. |
| | 3. ຈຳເລີຍຖືກປັບປັ້ງຈາກການເຂົ້າໄປໃນພື້ນທີ່ ຫລື ທາງໃນ ☐ ໃນບ່ອນທີ່ພັກອາສັຍ ☐ ໃນທີ່ທຳງານ, ☐ ໃນໂຮງຮຽນຂອງໂຈດ ☐ ໃນບ່ອນຝາກເດັກ ຫລື ໂຮງຮຽນຂອງ ☐ ເດັກຜູ້ທີ່ມີຊື່ຢູ່ໃນຕາຕະລາງຂ້າງເທິງນີ້, ☐ ເດັກຕ່ຳກວ່າກະສຽນເຫລົ່ານີ້ເທົ່ານັ້ນ.<br>☐ ອື່ນໆ<br>☐ ທີ່ຢູ່ຂອງໂຈດແມ່ນຖືກປົກປ້ອງໃວ້ເປັນຄວາມລັບ ☐ ໂຈດຍົກເວັ້ນການປົກປິດໃວ້ເປັນຄວາມລັບຂອງທີ່ຢູ່ຊຶ່ງແມ່ນ: |
| | 4. ໂຈດຈະມີສິດສຸດຂາດຄົນດຽວໃນບ້ານເຮືອນບ່ອນທີ່ໂຈດ ແລະ ຈຳເລີຍຢູ່ຮ່ວມກັນ. ຈຳເລີຍຈະຕ້ອງໜີອອກຈາກເຮືອນ ໂດຍທັນທີໂລດ. ຈຳເລີຍຈະເອົາເຄື່ອງນຸ່ງສ່ວນຕົວໄປນຳໄດ້ ແລະ ເຄື່ອງມືຫາກິນຈາກບ້ານໃນຂະນະທີ່ເຈົ້າໜ້າທີ່ຕຳຣວດຢູ່ທີ່ນັ້ນ.<br>☐ ທີ່ຢູ່ຂອງໂຈດແມ່ນຖືກປົກປ້ອງໃວ້ເປັນຄວາມລັບ ☐ ໂຈດຍົກເວັ້ນການປົກປິດໃວ້ເປັນຄວາມລັບຂອງທີ່ຢູ່ຊຶ່ງແມ່ນ |
| | 5. ຈຳເລີຍຖືກຫ້າມຈາກການເຂົ້າມາໄດ້ໂດຍຮູ້ຈັກດີ, ຫລື ການຢູ່ໂດຍຮູ້ຈັກດີພາຍໃນ____________________ (ຣະຍະທາງ) ຂອງ ☐ ບ່ອນຢູ່ຂອງໂຈດ ☐ ໃນທີ່ທຳງານ, ☐ ໂຮງຮຽນຂອງໂຈດ ☐ ໃນບ່ອນຝາກເດັກ ຫລື ໂຮງຮຽນຂອງ ☐ ເດັກຜູ້ທີ່ມີຊື່ຢູ່ຕາຕະ ລາງຂ້າງເທິງນີ້, ☐ ເດັກຕ່ຳກວ່າກະສຽນເຫລົ່ານີ້ເທົ່ານັ້ນ.<br><br>☐ ອື່ນໆ |
| | 6. ໂຈດໄດ້ມີສິດຄອບຄອງສິ່ງຂອງສ່ວນຕົວອັນສຳຄັນ, ລວມທັງສິ່ງຂອງຕ່າງໆທີ່ຖືກກ່າວຕໍ່ໄປນີ້: |
| | 7. ໂຈດຖືກອະນຸມັດໃຫ້ໄດ້ມີສິດໃຊ້ຣົຖດັ່ງຕໍ່ໄປນີ້:<br>ປີ, ຍີ່ຫໍ້ ແລະ ແບບ ______________________________ ເລຂທະບຽນຣົຖເລຂທີ: ____________ |
| | 8. ອື່ນໆ: |
| | 9. ຈຳເລີຍຈະຕ້ອງໄປຮັບການປິ່ນປົວ ແລະ ຮັບການອົບຮົມປຶກສາຕາມຕໍ່ລົງໄປນີ້<br>☐ ໂຄງການຜູ້ບຸກຣຸກດ້ານການຜິດຖຽງຮຸນແຮງໃນຄອບຄົວຊຶ່ງຖືກອະນຸມັດພາຍໃຕ້ກົດໝາຍ RCW 26.50.150 ຫລື ການອົບຮົມປຶກສາຢູ່ທີ່: ______________________________<br>☐ ຫ້ອງຮຽນສຳລັບການເປັນພໍ່ແມ່ຢູ່ທີ່: ______________________________<br>☐ ການປິ່ນປົວຢາເສພຕິດ/ເຫລົ້າຢູ່ທີ່: ______________________________<br>☐ ອື່ນໆ: |
| | 10. ໂຈດຖືກອະນຸມັດເກັບເອົາເກັບເອົາຄ່າທຳນຽມ ແລະ ຄ່າໃຊ້ຈ່າຍຂອງຄ່າຟ້ອງຂຶ້ນສານຈາກຈຳເລີຍເປັນຈຳນວນ<br>$____________ |

11. ທຸກຝ່າຍຈະຕ້ອງໄດ້ກັບຄືນມາຂຶ້ນສານໃນວັນທີ ______________________ ເວລາ __________ ສໍາລັບການກວດເບິ່ງຄືນ.

ໝາຍໃສ່ສິ່ງຕໍ່ລົງໄປນີ້ເທົ່ານັ້ນຖ້າຫາກວ່າເອົາການປົກປ້ອງທີ່ຖືກສັ່ງອອກມາກ່ຽວຂ້ອງນໍາເດັກຕໍ່າກວ່າກະສຽນ:

12. ໂຈດໄດ້ຖືກອະນຸມັດໃຫ້ໃນການເບິ່ງແຍງດູແລຊົ່ວຄາວ, ຄຸ້ມຄອງ ແລະ ຄວບຄຸມຂອງ ☐ ເດັກຕໍ່າກວ່າກະສຽນຜູ້ທີ່ຖືກບົ່ງຊື່ຢູ່ໃນຕາຕະລາງຂ້າງເທິງນີ້ ☐ ເດັກຕໍ່າກະສຽນເຫລົ່ານີ້ເທົ່ານັ້ນ:

13. ຈໍາເລີຍຖືກຢັບຢັ້ງຈາກການເຂົ້າມາແຊກແຊງນໍາການຄຸ້ມຄອງຮ່າງກາຍ ຫລື ຕາມກົດໝາຍຂອງ ☐ ເດັກຕໍ່າກວ່າກະສຽນຜູ້ທີ່ຖືກບົ່ງຊື່ຢູ່ໃນຕາຕະລາງຂ້າງເທິງນີ້ ☐ ເດັກຕໍ່າກະສຽນເຫລົ່ານີ້ເທົ່ານັ້ນ:

14. ຈໍາເລີຍຢັບຢັ້ງຈາກການພາອອກໄປຈາກຣັດ: ☐ ເດັກຕໍ່າກວ່າກະສຽນ ຜູ້ທີ່ຖືກບົ່ງຊື່ຢູ່ໃນຕາຕະລາງຂ້າງເທິງນີ້ ☐ ເດັກຕໍ່າກະ ສຽນເຫລົ່ານີ້ເທົ່ານັ້ນ:

15. ຈໍາເລີຍຈະຖືກອະນຸຍາດໃຫ້ສໍາລັບການຢ້ຽມຢາມເດັກຕາມຕໍ່ລົງໄປນີ້: ______________________

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

ໂຈດຈະຂໍຮ້ອງເອົາການດັດແປງໃນການຢ້ຽມຢາມໄດ້ຖ້າຫາກວ່າຈໍາເລີຍພິດພາດບໍ່ປະຕິບັດຕາມການປິ່ນປົວ ຫລື ການອົບຮົມປຶກສາຕາມທີ່ຖືກສັ່ງອອກມາໂດຍສານ

**ຖ້າຫາກວ່າບຸກຄົນຜູ້ທີ່ເດັກນ້ອຍອາສັຍຢູ່ນໍາໃນເວລາສ່ວນຫລາຍແມ່ນມີການທີ່ຈະເຄື່ອນຍ້າຍເດັກນ້ອຍ, ບຸກຄົນນັ້ນຕ້ອງປະຕິບັດຕາມໃຫ້ສອດຄ່ອງນໍາກົດລະບຽບຂອງການແຈ້ງການຂອງກົດໝາຍ Child Relocation Act. ບຸກຄົນຜູ້ທີ່ມີສິດມີເວລາຢູ່ນໍາເດັກນ້ອຍພາຍໃຕ້ຄໍາສັ່ງຂອງສານຈະຄັດຄ້ານແຜນການເຄື່ອນຍ້າຍເດັກໄດ້. ໃຫ້ເບິ່ງກົດໝາຍ RCW 26.09, RCW 26.10 ຫລື RCW 26.26 ເພື່ອຣາຍລະອຽດເພີ້ມເຕີມ.**

**ຄໍາເຕືອນຕໍ່ຈໍາເລີຍ:** ການລ່ວງລະເມີດເງື່ອນໄຂຢູ່ໃນຄໍາສັ່ງໃບນີ້ທີ່ມີການແຈ້ງບອກເງື່ອນໄຂຕົວຈິງແມ່ນຄວາມຜິດອາດຍາພາຍໃຕ້ມາຕຣາ 26.50 RCW <u>ແລະ ຈະເຣັດໃຫ້ຜູ້ລ່ວງລະເມີດຖືກຈັບກຸມຕົວ.</u> ຖ້າຫາກວ່າການລ່ວງລະເມີດຄໍາສັ່ງປົກປ້ອງຮັກສາກ່ຽວຂ້ອງນໍາການເດີນທາງຂ້າມເຂດແດນຂອງຣັດ ຫລື ຊາຍແດນຂອງເຂດມີສິດຂອງຊົນເຜົ່າ, ຫລື ກ່ຽວຂ້ອງກັບການປະພຶດພາຍໃນສິດທາງນໍ້າ ແລະ ບົກພິເສດຂອງສະຫາຣັດອະເມຣິກາ, ຊຶ່ງຈະລວມເອົາດິນຂອງຊົນເຜົ່າ, ຈໍາເລີຍຈະຖືກລົງໂທດຕາມກົດໝາຍຢູ່ໃນສານຂອງຣັຖບານກາງພາຍໃຕ້ 18 U.S.C. §§ 2261, 2261A, ຫລື 2262. ການລ່ວງລະເມີດຄໍາສັ່ງໃບນີ້ແມ່ນຄວາມຜິດຮ້າຍແຮງນອກຈາກວ່າສິ່ງນຶ່ງຂອງເງື່ອນໄຂຕໍ່ລົງໄປນີ້ກ່ຽວຂ້ອງນໍາ: ການທໍາຮ້າຍຮ່າງກາຍທຸກໆຢ່າງຊຶ່ງເປັນການລ່ວງລະເມີດຄໍາສັ່ງອັນນີ້ ແລະ ບໍ່ໄດ້ຖືກມີນໍ້າໜັກທີ່ຈະທໍາຮ້າຍຢູ່ໃນຂະແນງນຶ່ງ ຫລື ຂະແນງ 2 ພາຍໃຕ້ກົດໝາຍ RCW 9A.36.011 ຫລື 9A36.021 ແມ່ນອາຍັນຈໍາພວກ C. ການປະພຶດຕ່າງໆໃນການລ່ວງລະເມີດຄໍາສັ່ງໃບນີ້ຊຶ່ງແມ່ນດ້ວຍຄວາມບໍ່ຣະມັດຣະວັງ ແລະ ກໍ່ໃຫ້ເກີດການສ່ຽງອັນໃຫຍ່ຫລວງຕໍ່ການເສັຽຊີວິດ ຫລື ການບາດເຈັບທາງຮ່າງກາຍຮ້າຍແຮງຕໍ່ຄົນອື່ນອີກແມ່ນອາຍັນຈໍາພວກ C. ອີກ ອັນນຶ່ງ, ການລ່ວງລະເມີດຄໍາສັ່ງໃບນີ້ແມ່ນອາຍັນຈໍາພວກ C ຖ້າຫາກວ່າຈໍາເລີຍໄດ້ຮັບການຕັດສິນລົງໂທດຢ່າງໜ້ອຍ 2 ເທື່ອໃນຜ່ານມາສໍາລັບການລ່ວງລະເມີດຄໍາສັ່ງປົກປ້ອງຊຶ່ງໄດ້ຖືກສັ່ງອອກມາພາຍໃຕ້ມາຕຣາ 10.26 ຫລື 74 RCW.

ໃຊ້ການໄດ້ໂດຍທັນທີໂລດ, ແລະ ຕໍ່ມານານເທົ່ານານທີ່ຄຳສັ່ງປົກປ້ອງອັນນີ້ຍັງມີຜົນບັງຄັບໃຊ້ໄດ້ຢູ່, ຈຳເລີຍຈະບໍ່ມີຢູ່ໃນກັມມະສິດປືນ ຫລື ອາວຸດ. 18 U.S.C. § 922(g)(8). ການລ່ວງລະເມີດກົດໝາຍອາວຸດຂອງຣັຖບານກາງອັນນີ້ມີການປັບໃໝເງິນ, ຕິດຄຸກ 10 ປີ ແລະ ປັບໃໝ $250,000. ການຍົກເວັ້ນມີຢູ່ສຳລັບເຈົ້າໜ້າຕຳຣວດ ແລະ ເຈົ້າໜ້າທີທະຫານເມື່ອເວລາພົກອາວຸດທີ່ຖືກເບີກອອກໃຫ້ໂດຍກົມ/ຣັຖາບານ. 18 U.S.C. § 925(a)(1). ຖ້າຫາກວ່າຈຳເລີຍຖືກຕັດສິນໃນຄວາມຜິດຂອງການຜິດຖຽງຮຸນແຮງໃນຄອບຄົວ, ຈຳເລີຍຈະຖືກຫວງ ຫ້າມຕລອດຊີວິດຈາກການມີປືນ ຫລື ອາວຸດຢູ່ໃນກັມມະສິດ. 18 U.S.C. § 922(g)(9); RCW 9.41.040.

ທ່ານສາມາດຖືກຈັບກຸມຕົວໄດ້ເຖິງແມ່ນວ່າບຸກຄົນຜູ້ທີ່ໄດ້ຮັບຄຳສັ່ງໄດ້ເຊື້ອເຊີນ ຫລື ອະນຸຍາດໃຫ້ທ່ານທີ່ຈະລ່ວງລະເມີດສິ່ງຫວງຫ້າມຂອງຄຳສັ່ງ. ທ່ານມີໜ້າທີຮັບຜິດຊອບຜູ້ດຽວທີ່ຈະຫລີກເວັ້ນ ຫລື ຢຸດຢັ້ງຈາກການລ່ວງລະເມີດເງື່ອນໄຂຂອງຄຳສັ່ງ. ມີແຕ່ສານເທົ່ານັ້ນສາມາດປ່ຽນແປງຄຳສັ່ງຫລັງຈາກທີ່ໄດ້ຮັບຄຳຮ້ອງເປັນລາຍລັກອັກສອນ.

ອີງຕາມກົດໝາຍ 18 U.S.C. § 2265, ສານຢູ່ໃນຣັດໃດຣັດນຶ່ງຂອງ 50 ຣັດ, the District of Columbia, Puerto Rico, ດິນແດນຂອງສະຫາຣັດອະເມຣິກາທຸກໆບ່ອນ, ແລະ ດິນຂອງຜົ່າອິນດຽນທຸກໆບ່ອນພາຍໃນສະຫາຣັດອະເມຣິກາຈະຮັບຮູ້ຢ່າງເຕັມໃຈທີ່ສຸດ ແລະ ຮັບເອົາຄຳສັ່ງໃບນີ້.

---

ຍັງໄດ້ຖືກສັ່ງອອກມາຕື່ມອີກວ່າສະມຽນຂອງສານຈະຕ້ອງໄດ້ສົ່ງຕໍ່ໃບອັດສຳເນົາຂອງຄຳສັ່ງໃບນີ້ໃນ ຫລື ກ່ອນວັນຂຶ້ນສານເທື່ອໜ້າໄປຫາ ______________________ ☐ ຫ້ອງການຂອງກົມຕຳຣວດເທສບານ ☐ ກົມຕຳຣວດບ່ອນທີ່ຈຳເລີຍອາສັຍຢູ່ຊຶ່ງຈະຖືກຕີເຂົ້າໃນຣະບົບເກັບກຳຂໍ້ມູນດ້ານອາສຍາກັມທາງຄອມພິວເຕີ້ນທີ່ມີຢູ່ໃນຣັດນີ້ຊຶ່ງຖືກໃຊ້ໂດຍເຈົ້າໜ້າທີ່ຕຳຣວດເພື່ອຈະບົ່ງລາຍຊື່ຂອງໝາຍເກາະຈັບ ກຸມຕົວຊຶ່ງຍັງຄ້າງຢູ່.

☐ ສະມຽນຂອງສານຈະສົ່ງໃບອັດສຳເນົາຂອງຄຳສັ່ງໃບນີ້ໃນ ຫລື ກ່ອນວັນຂຶ້ນສານເທື່ອໜ້າໄປຫາ ______________________ ☐ ຫ້ອງການຂອງກົມຕຳຣວດເທສບານ. ☐ ກົມຕຳຣວດບ່ອນທີ່ຈຳເລີຍອາສັຍຢູ່ຊຶ່ງວ່າຈະຖືກຍື່ນໃຫ້ໃນມືຈຳເລີຍດ້ວຍຕົນເອງໃບອັດສຳເນົາຂອງຄຳສັ່ງໃບນີ້ ແລະ ຈະຂຽນປະກອບໂດຍທັນທີໂລດ ແລະ ສົ່ງຄືນມາຫາສານບ່ອນນີ້ຫລັກຖານຂອງການສົ່ງໃຫ້.

☐ ໂຈດຈະສົ່ງຄຳສັ່ງໃບນີ້ໃສ່ມືໂດຍທາງ ☐ ໄປສະນີ ☐ ໜັງສືຕີພິມ

☐ ຈຳເລີຍໄດ້ຈັດແຈງການສົ່ງໃຫ້ທາງສ່ວນຕົວສຳລັບການສົ່ງຄຳສັ່ງໃບນີ້.

☐ ຈຳເລີຍມາປະກົດຕົວ ແລະ ໄດ້ຖືກແຈ້ງບອກກ່ຽວກັບຄຳສັ່ງໂດຍສານ; ການດຳເນີນການເພີ້ມເຕີມບໍ່ຕ້ອງມີ.

---

☐ ກົມຕຳຣວດບ່ອນທີ່ ☐ ໂຈດ ☐ ຈຳເລີຍອາສັຍຢູ່ຈະຕ້ອງ:

- ☐ ຊ່ວຍເຫລືອໂຈດໃນການເກັບກຳເອົາ:
  - ☐ ການຍຶດເອົາເປັນກັມມະສິດໃນ ☐ ບ້ານເຮືອນຂອງໂຈດ ☐ ສິ່ງຂອງສ່ວນຕົວຊຶ່ງຕັ້ງຢູ່ທີ່: ☐ ບ່ອນອາສັຍຢູ່ຮ່ວມກັນ ☐ ເຮືອນຂອງຈຳເລີຍ ☐ ອື່ນໆ ______________________.
  - ☐ ການຄຸ້ມຄອງຂອງເດັກຕ່ຳກວ່າກະສຽນທີ່ມີຊື່ຢູ່ຂ້າງເທິງນີ້, ລວມທັງການເອົາການ ຄຸ້ມຄອງຮ່າງກາຍເພື່ອການສົ່ງຕໍ່ໃຫ້ໂຈດ.
  - ☐ ການຄຸ້ມຄອງຂອງເດັກຕ່ຳກວ່າກະສຽນທີ່ມີຊື່ຢູ່ຂ້າງເທິງນີ້, ລວມທັງການເອົາການ
  - ☐ ການໃຊ້ຣົດຊຶ່ງຖືກແຕ່ງຕັ້ງໃຫ້ຢູ່ຂ້າງເທິນນີ້ ______________________
  - ☐ ອື່ນໆ ______________________
- ☐ ອື່ນໆ

ຄຳສັ່ງສຳລັບການປົກປ້ອງຮັກສາໃບນີ້ໝົດກຳນົດໃນ ______________________ (ວັນທີ)

ຖ້າຫາກວ່າຣະຍະເວລາຂອງຄຳສັ່ງໃບນີ້ກາຍເກີນນຶ່ງປີ, ສານພົບວ່າຄຳສັ່ງຕ່ຳກວ່ານຶ່ງປີຈະບໍ່ພຽງພໍທີ່ຈະຫລີກເວັ້ນການກະທຳແບບການຜິດຖຽງຮຸນແຮງໃນຄອບຄົວໃນຂ້າງໜ້າ.

ລົງວັນທີ ______________________ ຢູ່ທີ່ ______________________ ໂມງ/ແລງ

______________________
ຫົວໜ້າສານ/ຜູ້ພິພາກສາ

ສເນີໂດຍ:

ຂ້າພະເຈົ້າຮັບຮູ້ການຮັບເອົາໂກປີ້ຂອງຄຳສັ່ງປົກປ້ອງຮັກສາໃບນີ້:

| ______________________ | | ______________________ | |
|---|---|---|---|
| ໂຈດ | ວັນທີ | ຈຳເລີຍ | ວັນທີ |